**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 13481 /ຍທຂ

ນະຄອນຫລວງວຽງຈັນ, ວັນທີ 1 ກໍລະກົດ 2020

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະ ຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟແຕ່ຊາຍແດນລາວ-ຈີນ ຫາ ນະຄອນວຽງຈັນ

- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 295/ນຍ, ລົງວັນທີ 04 ກັນຍາ 2017;
- ອີງຕາມ ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງ ຫົວໜ້າຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ສະບັບເລກທີ 79/ນຍ, ລົງວັນທີ 07 ຕຸລາ 2019 ແລະ ການແຕ່ງຕັ້ງພະນັກງານຂັ້ນຮອງຫົວໜ້າຄະນະຄຸ້ມຄອງໂຄງການກໍ່ ສ້າງທາງລົດໄຟລາວ-ຈີນ ສະບັບເລກທີ 27222/ຍທຂ, ລົງວັນທີ 23 ຕຸລາ 2019;
- ອີງຕາມ ການສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 311/ຍທຂ.ກຈພ ລົງວັນທີ 14/05/2020.

**ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກໍານົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟແຕ່ຊາຍແດນລາວ-ຈີນ ຫາ ນະຄອນວຽງຈັນ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານຂອງໂຄງການດັ່ງກ່າວ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟ ແຕ່ຊາຍແດນ ລາວ-ຈີນ ຫາ ນະຄອນວຽງຈັນ ຂຽນຫຍໍ້ວ່າ **"ຄຟລຈ"** ເປັນພາສາອັງກິດ (**Laos-China Railway Project Management Committee ຂຽນຫຍໍ້ວ່າ " LCRM "**) ສັງກັດຢູ່ກະຊວງໂຍທາທິການ ແລະ ຂົນສົ່ງ ມີພາລະບົດບາດເປັນເສນາທິການໃຫ້ແກ່ ທ່ານຮອງນາຍົກລັດຖະມົນຕີ, ຫົວໜ້າຄະນະຊີ້ນໍາໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ແລະ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ, ຮອງຫົວໜ້າຄະນະຊີ້ນໍາໂຄງການກໍ່ສ້າງທາງລົດໄຟລາວ-ຈີນ (ຜູ້ປະຈໍາການ) ໃນການຄຸ້ມຄອງ, ຕິດຕາມ ແລະ ປະສານສົມທົບກັບບໍລິສັດທາງລົດໄຟລາວ-ຈີນ ຈໍາກັດ, ປະສານ ສົມທົບກັບ

ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດບັນດາຂັ້ນຕອນຕ່າງໆ ຂອງໂຄງການກໍ່ສ້າງທາງລົດໄຟ ແຕ່ຊາຍແດນ ລາວ-ຈີນ ຫາ ນະຄອນຫຼວງວຽງຈັນ ໃຫ້ສໍາເລັດຕາມແຜນການ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຄຸ້ມຄອງ, ຕິດຕາມ ແລະ ປະສານສົມທົບກັບບໍລິສັດທາງລົດໄຟລາວ-ຈີນ ຈໍາກັດ ເພື່ອຈັດຕັ້ງປະຕິບັດໂຄງການ ແຕ່ມື້ເລີ່ມຕົ້ນຈົນສໍາເລັດໂຄງການ;
2. ປະສານສົມທົບກັບຂະແໜງການຕ່າງໆ ທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອອໍານວຍຄວາມສະດວກໃນການຈັດຕັ້ງປະຕິບັດບັນດາໜ້າວຽກ ຂອງໂຄງການໃຫ້ສໍາເລັດຕາມຈຸດປະສົງ ແລະ ຄາດໝາຍຂອງໂຄງການ;
3. ຕິດຕາມ ແລະ ຄຸ້ມຄອງ ການນໍາເຂົ້າແຮງງານ, ວັດຖຸອຸປະກອນ, ກົນຈັກ ແລະ ຍານພາຫະນະຮັບໃຊ້ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
4. ໄກ່ເກ່ຍບັນຫາທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ການຄຸ້ມຄອງຄວາມປອດໄພຮອບດ້ານ, ການແກ້ໄຂສິ່ງກີດຂວາງ, ເວນຄືນທີ່ດິນ, ແລະ ການປະຕິບັດສັນຍາສໍາປະທານ;
5. ປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງທັງຝ່າຍລາວ ແລະ ຈີນ ໃນການວາງແຜນບໍາລຸງ ແລະ ກໍ່ສ້າງບຸກຄະລາກອນ ຢູ່ໃນຂະແໜງການຕ່າງໆ ທີ່ກ່ຽວກັບການລົດໄຟ;
6. ລາຍງານຄວາມຄືບໜ້າ ກ່ຽວກັບການຈັດຕັ້ງປະຕິບັດໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ໃຫ້ຂັ້ນເທິງຢ່າງເປັນປະຈໍາ;
7. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຫົວໜ້າຄະນະຊີ້ນໍາໂຄງການກໍ່ສ້າງທາງລົດໄຟລາວ-ຈີນ.

**ມາດຕາ 4 ຂອບເຂດສິດ.**

1. ສະເໜີປັບປຸງ, ສ້າງຕັ້ງ ຫຼື ລົບລ້າງກົງຈັກການຈັດຕັ້ງ, ຕໍາແໜ່ງງານທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃນເມື່ອເຫັນວ່າບໍ່ສອດຄ່ອງ;
2. ສະເໜີປັບປຸງ, ດັດແປງ ຫຼື ລົບລ້າງຂໍ້ກໍານົດກົດລະບຽບທີ່ເຫັນວ່າບໍ່ສອດຄ່ອງກັບວຽກງານວິຊາສະເພາະຂອງຕົນ, ອອກຄໍາແນະນໍາ ແລະ ແຈ້ງການດ້ານວິຊາສະເພາະຕໍ່ພາກສ່ວນທີ່ກ່ຽວຂ້ອງ;
3. ສະເໜີແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ, ເລື່ອນຊັ້ນ, ຍ້ອງຍໍ, ປະຕິບັດວິໄນ, ປົດຕໍາແໜ່ງລັດຖະກອນທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ບົນພື້ນຖານການເຫັນດີເປັນເອກະພາບ ຂອງກົມຈັດຕັ້ງ ແລະ ພະນັກງານ;
4. ພົວພັນປະສານສົມທົບກັບທຸກອົງການຈັດຕັ້ງຂອງພັກ-ລັດ ແລະ ປະຊາຊົນ ເພື່ອພ້ອມກັນຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິຄໍາສັ່ງຂອງພັກ, ກົດໝາຍ, ດໍາລັດ ແລະ ລະບຽບການຂອງລັດ;
5. ຕິດຕາມ ແລະ ກວດກາ ການເຄື່ອນໄຫວຮອບດ້ານ ຂອງບັນດາພະແນກການຕ່າງໆ ທີ່ຂຶ້ນກັບຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
6. ຂຶ້ນແຜນ, ຄຸ້ມຄອງ ແລະ ນໍາໃຊ້ງົບປະມານ, ຍານພາຫະນະ, ກົນຈັກ ແລະ ວັດຖຸປະກອນຕ່າງໆ ຕາມການມອບໝາຍຂອງຄະນະຊີ້ນໍາໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
7. ໂຄສະນາເຜີຍແຜ່ວຽກງານ, ຜົນສໍາເລັດທາງດ້ານເຕັກນິກ, ວິທະຍາສາດ ແລະ ຫົວຄິດປະດິດສ້າງທີ່ກ່ຽວຂ້ອງກັບໂຄງການ;
8. ປະສານສົມທົບກັບ ຄະນະຊີ້ນໍາໂຄງການຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອອໍານວຍຄວາມສະດວກໃນດ້ານຕ່າງໆ ໃນການຈັດຕັ້ງປະຕິບັດໂຄງການ;

9. ຊີ້ນຳຫ້ອງການປະສານງານໂຄງການປະຈຳຢູ່ທ້ອງຖິ່ນ ເພື່ອປະຕິບັດໜ້າທີ່ຂອງຕົນ ໃນການອຳນວຍຄວາມສະດວກໃຫ້ແກ່ວຽກງານໂຄງການຢ່າງທັນການ;
10. ປະຕິບັດສິດອື່ນ ຕາມການມອບໝາຍຂອງຄະນະຊີ້ນຳໂຄງການກໍ່ສ້າງທາງລົດໄຟລາວ-ຈີນ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟ ແຕ່ຊາຍແດນ ລາວ-ຈີນ ຫາ ນະຄອນວຽງຈັນ ປະກອບມີ:

1. ພະແນກ ຈັດຕັ້ງ-ບໍລິຫານ ແລະ ຄຸ້ມຄອງການນຳເຂົ້າ;
2. ພະແນກ ສັງລວມ, ຕິດຕາມ ແລະ ປະສານງານ;
3. ພະແນກ ງົບປະມານ ແລະ ການເງິນ.

### ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ

1. ຫົວໜ້າຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟ ແຕ່ຊາຍແດນ ລາວ-ຈີນ ຫາ ນະຄອນວຽງຈັນ ມີຄວາມຮັບຜິດຊອບໂດຍກົງຕໍ່ ທ່ານ ຮອງນາຍົກລັດຖະມົນຕີ, ຫົວໜ້າຄະນະຊີ້ນຳໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ແລະ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ, ຮອງຫົວໜ້າຄະນະຊີ້ນຳໂຄງການກໍ່ສ້າງທາງລົດໄຟລາວ-ຈີນ (ຜູ້ປະຈຳການ) ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານທັງໝົດຂອງໂຄງການ.

   ໃນເວລາທີ່ຫົວໜ້າຄະນະບໍ່ຢູ່ (ໄປເຄື່ອນໄຫວວຽກງານຕ່າງແຂວງ, ຕ່າງປະເທດ ແລະ ອື່ນໆ ) ຕ້ອງມອບສິດໃຫ້ຮອງຫົວໜ້າຄະນະ ທ່ານໃດໜຶ່ງເປັນຜູ້ຮັກສາການແທນ;
2. ມີຮອງຈຳນວນໜຶ່ງ, ເພື່ອຊ່ວຍວຽກຫົວໜ້າຄະນະ ຊີ້ນຳຂົງເຂດວຽກງານໃດໜຶ່ງຕາມການແບ່ງງານ ແລະ ຕາມການມອບໝາຍ, ມີຄວາມຮັບຜິດຊອບຕໍ່ຫົວໜ້າຄະນະກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງຂອງຂົງເຂດວຽກງານທີ່ຕົນຖືກມອບໝາຍຊີ້ນຳ;

   ຮອງຫົວໜ້າຄະນະ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນຊ່ວງໄລຍະຮັກສາການແທນນັ້ນໃຫ້ຫົວໜ້າຄະນະ ພາຍຫຼັງກັບມາປະຈຳການ;
3. ມີຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ວິຊາການຈຳນວນໜຶ່ງ ມີຄວາມຮັບຜິດຊອບໂດຍກົງຕໍ່ຫົວໜ້າຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ແລະ ຮອງຫົວໜ້າຄະນະຄຸ້ມຄອງໂຄງການຜູ້ຊີ້ນຳກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງໃນການເຄື່ອນໄຫວວຽກງານຂອງຕົນ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

### ມາດຕາ 7 ໜ້າທີ່ຂອງພະແນກ ຈັດຕັ້ງ-ບໍລິຫານ ແລະ ຄຸ້ມຄອງການນຳເຂົ້າ

1. ເປັນໃຈກາງໃນການຄຸ້ມຄອງວຽກງານບໍລິຫານ, ຈັດຕັ້ງ, ພັກ ແລະ ພະນັກງານ ພາຍໃນຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
2. ຄຸ້ມຄອງວຽກງານ ເອກະສານເຂົ້າ-ອອກ, ພິທີການ ແລະ ເຄື່ອງຮັບໃຊ້ພາຍໃນ ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;

3. ຄຸ້ມຄອງ, ນໍາໃຊ້ ແລະ ປົກປັກຮັກສາບັນດາເອກະສານຂອງໂຄງການບໍ່ໃຫ້ຕົກເຮ່ຍເສຍຫາຍ;
4. ເປັນໃຈກາງໃນການປະສານກັບທຸກພະແນກການພາຍໃນ ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
5. ຂຶ້ນແຜນ, ຄຸ້ມຄອງຊັບສິນ, ການນໍາໃຊ້ຍານພາຫະນະ ແລະ ວັດຖຸອຸປະກອນ ຂອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
6. ຕິດຕາມ ຊຸກຍູ້ ການຈັດຕັ້ງປະຕິບັດ ແລະ ສະຫຼຸບສັງລວມ ແຜນການເຄື່ອນໄຫວປະຈໍາອາທິດ, ເດືອນ, ງວດ ແລະ ປີ ຂອງຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການກໍ່ສ້າງ ແລະ ຝຶກອົບຮົມພະນັກງານວິຊາການ ກ່ຽວກັບການລົດໄຟ;
8. ປະສານສົມທົບກັບບໍລິສັດທາງລົດໄຟລາວ-ຈີນ ຈໍາກັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າວິທີການອໍານວຍຄວາມສະດວກ ແລະ ຄຸ້ມຄອງການນໍາເຂົ້າ ຍານພາຫະນະ, ກົນຈັກ, ວັດຖຸອຸປະກອນ ແລະ ແຮງງານເພື່ອມາຮັບໃຊ້ໂຄງການ;
9. ປະສານສົມທົບກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ບໍລິສັດທາງລົດໄຟລາວ-ຈີນ ຈໍາກັດ ເພື່ອຄຸ້ມຄອງ, ຕິດຕາມ ແລະ ເກັບກໍາບັນຊີເຂົ້າ-ອອກ ຂອງຊ່ຽວຊານ ແລະ ແຮງງານຕ່າງປະເທດ;
10. ປະສານສົມທົບກັບກະຊວງການເງິນ ແລະ ບໍລິສັດທາງລົດໄຟລາວ-ຈີນ ຈໍາກັດ ເພື່ອຄຸ້ມຄອງ, ຕິດຕາມ ແລະ ເກັບກໍາບັນຊີກົນຈັກ, ຍານພາຫະນະ ແລະ ວັດຖຸອຸປະກອນຮັບໃຊ້ໂຄງການ;
11. ປະສານສົມທົບກັບບໍລິສັດທາງລົດໄຟລາວ-ຈີນ ຈໍາກັດ ແລະ ຂະແໜງການກ່ຽວຂ້ອງກ່ຽວກັບດ່ານສາກົນ ເພື່ອຮ່ວມກັນຈັດສັນວິທີການເຂົ້າ-ອອກຂອງຄົນ, ຍານພາຫະນະ, ກົນຈັກ ແລະ ວັດຖຸອຸປະກອນຮັບໃຊ້ໂຄງການເພື່ອໃຫ້ມີຄວາມສະດວກ ແລະ ປອດໄພ;
12. ກະກຽມ ແລະ ສັງລວມບັນດາເອກະສານໃຫ້ແກ່ກອງປະຊຸມຂອງຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ແລະ ຄະນະຊີ້ນໍາໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
13. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຫົວໜ້າຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ.

**ມາດຕາ 8 ໜ້າທີ່ຂອງພະແນກ ສັງລວມ, ຕິດຕາມ ແລະ ປະສານງານ**

1. ຄົ້ນຄວ້າສ້າງ ຄູ່ມືຕ່າງໆ ໃນການຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ໃຫ້ສອດຄ່ອງກັບລະບຽບການ ຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;
2. ເກັບກໍາບັນດາຮູບພາບ, ຂໍ້ມູນຂ່າວສານ ແລະ ເຫດການຕ່າງໆ ຂອງຂະບວນການດໍາເນີນໂຄງການແຕ່ຕົ້ນຈົນສໍາເລັດການກໍ່ສ້າງ;
3. ຕິດຕາມ ແລະ ປະສານສົມທົບກັບບໍລິສັດທາງລົດໄຟລາວ-ຈີນ ຈໍາກັດ ໃນການຈັດຕັ້ງປະຕິບັດ ການປັກຫຼັກໝາຍແລວທາງລົດໄຟ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງຢູ່ ສູນກາງ ແລະ ທ້ອງຖິ່ນ ກ່ຽວກັບທີ່ດິນ ທີ່ມີຜົນກະທົບຕໍ່ໂຄງການ, ການຍົກຍ້າຍສິ່ງກີດຂວາງ ແລະ ວຽກງານເກັບກູ້ລະເບີດ ເພື່ອຮັບປະກັນການມອບສະໜາມກໍ່ສ້າງໃຫ້ແກ່ຜູ້ຮັບເໝົາ;
5. ປະສານສົມທົບກັບບໍລິສັດທາງລົດໄຟລາວ-ຈີນ ຈໍາກັດ ແລະ ຂະແໜງການຢູ່ທ້ອງຖິ່ນໃນການອໍານວຍຄວາມສະດວກໃນການປະຕິບັດລະບຽບການກ່ຽວກັບສິ່ງແວດລ້ອມ ແລະ ສັງຄົມຢ່າງເຂັ້ມງວດ, ໂດຍສະເພາະກ່ອນການລົງມືກໍ່ສ້າງ;

6. ຕິດຕາມ, ເກັບກຳຫາງສຽງ ຫຼື ຄຳຮ້ອງຮຽນ-ຄຳສະເໜີຂອງປະຊາຊົນຕໍ່ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອແກ້ໄຂບັນຫາຕ່າງໆ ໃຫ້ທັນການ;
7. ປະສານສົມທົບກັບ ຄະນະກຳມະການໄກ່ເກ່ຍ, ຄະນະປະສານງານໂຄງການປະຈຳບັນດາແຂວງ ແລະ ນະຄອນຫຼວງວຽງຈັນ, ຂະແໜງການຂອງແຂວງ ແລະ ນະຄອນຫຼວງວຽງຈັນ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ຮັບເໝົາກໍ່ສ້າງບົນພື້ນຖານ ການສະເໜີຂອງບໍລິສັດທາງລົດໄຟລາວ-ຈີນ ຈຳກັດ, ລວມທັງວຽກງານການຮັກສາຄວາມປອດໄພ;
8. ປະສານສົມທົບກັບບໍລິສັດທາງລົດໄຟລາວ-ຈີນ ຈຳກັດ ແລະ ຄະນະກຳມະການໄກ່ເກ່ຍຂອງທ້ອງຖິ່ນກ່ຽວກັບສິ່ງກີດຂວາງ ເພື່ອຕິດຕາມກວດກາການຊຳລະຄ່າຊົດເຊີຍ ແລະ ຍົກຍ້າຍສິ່ງກີດຂວາງ, ການຄຸ້ມຄອງຄວາມປອດໄພຮອບດ້ານ ໃຫ້ສອດຄ່ອງ ກັບກົດໝາຍ ແລະ ລະບຽບການຂອງລັດ;
9. ຕິດຕາມຄວາມຂັດຂ້ອງ ແລະ ຮັບຄຳຮ້ອງ-ຄຳສະເໜີ ຂອງປະຊາຊົນເພື່ອຄົ້ນຄວ້າ ແລະ ປະສານກັບອົງການປົກຄອງທ້ອງຖິ່ນແກ້ໄຂຢ່າງທັນການ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງລັດ;
10. ຕິດຕາມ, ຊຸກຍູ້, ກວດກາ, ສະຫຼຸບສັງລວມຄວາມຄືບໜ້າຂອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ປະຈຳເດືອນ, ງວດ ແລະ ປີ ເພື່ອລາຍງານໃຫ້ ຂັ້ນເທິງ;
11. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຫົວໜ້າຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ.

**ມາດຕາ 9 ໜ້າທີ່ຂອງ ພະແນກ ງົບປະມານ ແລະ ການເງິນ**

1. ປະຕິບັດຕາມດຳລັດ, ກົດໝາຍ, ລະບຽບການ, ແຈ້ງການ ແລະ ຄຳແນະນຳກ່ຽວກັບການຄຸ້ມຄອງການເງິນ, ການເບີກຈ່າຍງົບປະມານປະຈຳ ງວດ, 6 ເດືອນ ແລະ ປີ;
2. ປະສານສົມທົບ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດແຜນງົບປະມານລາຍຮັບ ແລະ ງົບປະມານລາຍຈ່າຍບໍລິຫານ ປະຈຳເດືອນ, ງວດ, 6 ເດືອນ ແລະ ປີ ຂອງຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ;
3. ຄົ້ນຄ້ວາ, ສ້າງ ແລະ ສັງລວມ ແຜນງົບປະມານບໍລິຫານ, ງົບປະມານການຊົດເຊີຍ ແລະ ເງິນປະກອບຂາຮຸ້ນຂອງຝ່າຍລາວ ພ້ອມທັງຈັດສັນ ແລະ ແບ່ງຕົວເລກອະນຸມັດງົບປະມານລາຍຈ່າຍໃຫ້ບັນດາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ;
4. ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງບັນດາເອກະສານສະເໜີເບີກຈ່າຍງົບປະມານບໍລິຫານ ຂອງຄະນະຄຸ້ມຄອງໂຄງການ, ບັນດາຫ້ອງການປະສານງານປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;
5. ຄົ້ນຄ້ວາ ແລະ ຕິດຕາມການສະເໜີເບີກຈ່າຍການຊົດເຊີຍ ຂອງບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ລວມທັງເອກະສານການສະເໜີໂອນເງິນ ເພື່ອຊຳລະການຊົດເຊີຍ;
6. ລົງບັນຊີ, ສະຫຼຸບລາຍງານ ການເບີກຈ່າຍງົບປະມານບໍລິຫານໂຄງການ ປະຈຳເດືອນ, ງວດ, 6 ເດືອນ ແລະ ປີ;
7. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຫົວໜ້າຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 10 ຫຼັກການ**

ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບຂອງໝູ່ຄະນະກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ, ປະຕິບັດລະບອບຫົວໜ້າດຽວຕາມການແບ່ງຂັ້ນຄຸ້ມຄອງ ແລະ ບົນພື້ນຖານມີການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ຕິດພັນກັບການມອບສິດ ແລະ ມອບຄວາມຮັບຜິດຊອບໃຫ້ສົມເຫດສົມຜົນໃນການຕັດສິນບັນຫາພາຍໃນຂອບເຂດຂອງແຕ່ລະຂັ້ນ ແລະ ແຕ່ລະຄົນ.

**ມາດຕາ 11 ແບບແຜນວິທີເຮັດວຽກ**

1. ທຸກການເຄື່ອນໄຫວວຽກງານ ຂອງຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟ ແຕ່ຊາຍແດນ ລາວ-ຈີນ ຫາ ນະຄອນວຽງຈັນ ແມ່ນອີງໃສ່ຫຼັກການ ແລະ ລະບຽບການ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ;
2. ເຮັດວຽກຢ່າງມີແຜນການ, ແຜນງານ ແລະ ໂຄງການລະອຽດ, ມີການປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ, ແກ້ໄຂຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
3. ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປີ, ກອງປະຊຸມວິຊາການຕ່າງໆເພື່ອຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ, ເກັບກຳສະພາບລວມ ແລະ ສະເພາະດ້ານຈາກທຸກຂົງເຂດວຽກງານ ແລະ ສັງລວມລາຍງານໃຫ້ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 12 ການຈັດຕັ້ງປະຕິບັດ**

ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟ ແຕ່ຊາຍແດນ ລາວ-ຈີນ ຫາ ນະຄອນວຽງຈັນ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 13 ການຈັດຕັ້ງປະຕິບັດ**

ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟ ແຕ່ຊາຍແດນ ລາວ-ຈີນ ຫາ ນະຄອນວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 14 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 20517/ຍທຂ, ລົງວັນທີ 10 ກັນຍາ 2018 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປຈົນກວ່າໂຄງການສຳເລັດ.

**ລັດຖະມົນຕີ**

**ກະຊວງໂຍທາທິການ ແລະ ຂົນສົ່ງ**

ປອ. ບຸນຈັນ ສິນທະວົງ